**ກະຊວງຍຸຕິທຳສະຫະລັດ**

*ກົມສິດທິພົນລະເມືອງ*

**ກະຊວງສຶກສາທິການສະຫະລັດ**

*ຫ້ອງການສິດທິມະນຸດ ຂອງ*

# ຮັບປະກັນວ່າໃຫ້ນັກຮຽນຜູ້ຮຽນພາສາອັງກິດສາມາດເຂົ້າຮ່ວມຢ່າງມີຄວາມໝາຍ ແລະເທົ່າທຽມກັນໃນບັນດາໂປຣແກຣມການສຶກສາຕ່າງໆ

ນັກຮຽນຜູ້ຮຽນພາສາອັງກິດ (EL) ມີສັດສ່ວນເກົ້າເປີເຊັນຂອງຈຳນວນນັກຮຽນທັງໝົດໃນໂຮງຮຽນລັດຖະບານ ແລະໄດ້ຈົດທະບຽນເຂົ້າຮຽນໃນໂຮງຮຽນລັດຖະບານເກືອບສາມຈາກທຸກໆສີ່ແຫ່ງ. ພາຍໃຕ້ບົດທີ VI ຂອງກົດໝາຍວ່າດ້ວຍສິດທິພົນລະເມືອງ (Civil Rights Act) ປີ 1964 (Title VI) ແລະກົດໝາຍວ່າດ້ວຍໂອກາດການສຶກສາທີ່ເທົ່າທຽມກັນ (Equal Educational Opportunities Act) ປີ 1974 (EEOA), ໂຮງຮຽນລັດຖະບານຕ້ອງຮັບປະກັນໃຫ້ນັກຮຽນ EL ສາມາດເຂົ້າຮ່ວມຢ່າງມີຄວາມໝາຍ ແລະເທົ່າທຽມກັນໃນບັນດາໂປຣແກຣມການສຶກສາຕ່າງໆ.

ກະຊວງສຶກສາທິການສະຫະລັດ (ED) ແລະກະຊວງຍຸຕິທຳສະຫະລັດ (DOJ) ໄດ້ອອກຄຳແນະນຳຮ່ວມກັນເພື່ອແຈ້ງເຕືອນໃຫ້ບັນດາໜ່ວຍງານສຶກສາຂັ້ນລັດ (SEAs), ເຂດການສຶກສາພາກລັດ ແລະໂຮງຮຽນລັດຖະບານ ກ່ຽວກັບພັນທະຕາມກົດໝາຍຂອງເຂົາເຈົ້າໃນການຮັບປະກັນໃຫ້ນັກຮຽນ EL ສາມາດເຂົ້າຮ່ວມຢ່າງມີຄວາມໝາຍ ແລະເທົ່າທຽມກັນໃນບັນດາໂປຣແກຣມການສຶກສາຕ່າງໆ.

ໃບຂໍ້ມູນນີ້ອະທິບາຍໂດຍຫຍໍ້ກ່ຽວກັບຄຳແນະນຳຮ່ວມດັ່ງກ່າວ, ແຕ່ບໍ່ມີຈຸດປະສົງອະທິບາຍຢ່າງລະອຽດຄົບຖ້ວນກ່ຽວກັບການແກ້ໄຂບັນຫາທັງໝົດໃນຄຳແນະນຳນັ້ນ. .ໃນຂະນະທີ່ໃບຂໍ້ມູນນີ້ເນັ້ນໜັກໃສ່ຄວາມຮັບຜິດຊອບຂອງບັນດາເຂດການສຶກສາ, ຄຳແນະນຳອະທິບາຍໄດ້ຊີ້ບອກຢ່າງຊັດເຈນວ່າ SEAs ຍັງມີພັນທະຕາມກົດໝາຍຕໍ່ກັບນັກຮຽນ EL ແລະພໍ່ແມ່ທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດຈຳກັດ (LEP). ຄຳແນະນຳນີ້ມີໃຫ້ທີ່:

http://www2.ed.gov/about/offices/list/ocr/ellresources.html

## *ການລະບຸ ແລະການປະເມີນຄວາມສາມາດຂອງນັກຮຽນ EL ທັງໝົດ*

- ເຂດການສຶກສາຕ້ອງມີລະບຽບຂັ້ນຕອນທີ່ພອ້ມໃນການລະບຸນັກຮຽນ EL ທີ່ເປັນໄປໄດ້ຢ່າງຖືກຕ້ອງ ແລະທ່ວງທັນເວລາ. ເຂດການສຶກສາສ່ວນໃຫຍ່ນຳໃຊ້ການສຳຫຼວດພາສາທີ່ໃຊ້ຢູ່ເຮືອນໃນເວລາຈົດທະບຽນເຂົ້າຮຽນເພື່ອເກັບກຳຂໍ້ມູນກ່ຽວກັບພື້ນຖານພາສາຂອງນັກຮຽນ ແລະລະບຸນັກຮຽນຜູ້ທີ່ພາສາຕົ້ນຕໍ ຫຼືພາສາທີ່ໃຊ້ຢູ່ເຮືອນຂອງເຂົາເຈົ້າແມ່ນພາສາອື່ນທີ່ບໍ່ແມ່ນພາສາອັງກິດ.

- ຈາກນັ້ນ ເຂດການສຶກສາຕ້ອງກຳນົດວ່ານັກຮຽນ EL ທີ່ເປັນໄປໄດ້ແມ່ນ EL ແທ້ຫຼືບໍ່ ຜ່ານການທົດສອບທີ່ຖືກຕ້ອງ ແລະເຊື່ອຖືໄດ້ທີ່ປະເມີນຄວາມຄ່ອງແຄ້ວດ້ານພາສາອັງກິດໃນການເວົ້າ, ການຟັງ, ການອ່ານ ແລະການຂຽນ.

## *ສະໜອງການຊ່ວຍເຫຼືອດ້ານພາສາໃຫ້ແກ່ນັກຮຽນ EL*

- ນັກຮຽນ EL ມີສິດໄດ້ຮັບການບໍລິການຊ່ວຍເຫຼືອດ້ານພາສາທີ່ເໝາະສົມເພື່ອກາຍເປັນຜູ້ທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດ ແລະສາມາດເຂົ້າຮ່ວມຢ່າງເທົ່າທຽມກັນໃນໂປຣແກຣມການສິດສອນມາດຕະຖານພາຍໃນໄລຍະເວລາທີ່ສົມເຫດສົມຜົນ.
- ເຂດການສຶກສາສາມາດເລືອກເອົາຈາກໂປຣແກຣມຕ່າງໆທີ່ຖືກອອກແບບມາສຳລັບການສອນນັກຮຽນ EL ໂດຍມີເງື່ອນໄຂວ່າໂປຣແກຣມນັ້ນມີຄວາມເໝາະສົມດ້ານການສຶກສາໃນທາງທິດສະດີ ແລະມີປະສິດທິຜົນໃນການນຳໃຊ້ຕົວຈິງ.

## *ການຈັດຫາພະນັກງານແລະການສະໜັບສະໜູນໂປຣແກຣມ EL*

- ນັກຮຽນ EL ມີສິດເຂົ້າເຖິງໂປຣແກຣມ ELໂດຍມີຊັບພະຍາກອນທີ່ພຽງພໍເພື່ອຮັບປະກັນວ່າໂປຣແກຣມຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ເຊິ່ງລວມທັງຄູອາຈານທີ່ມີຄຸນວຸດທິສູງ, ພະນັກງານຊ່ວຍວຽກ ແລະເອກະສານການສິດສອນທີ່ເໝາະສົມ.
- ເຂດການສຶກສາຕ້ອງມີຄູສອນ EL, ພະນັກງານແລະຜູ້ບໍລິຫານທີ່ມີຄຸນວຸດທິຄົບຖ້ວນ ເພື່ອຈັດຕັ້ງປະຕິບັດໂປຣແກຣມ EL ຂອງເຂົາເຈົ້າຢ່າງມີປະສິດທິຜົນ ແລະຕ້ອງສະໜອງການຝຶກອົບຮົມເພີ້ມເຕີມເມື່ອຈຳເປັນ.

## *ສະໜອງການເຂົ້າເຖິງຢ່າງມີຄວາມໝາຍຕໍ່ກັບທຸກໂປຣແກຣມຫຼັກສູດການຮຽນການສອນ ແລະກິດຈະກຳນອກຫຼັກສູດ*

- ນັຮຽນ EL ຕອ້ງມີການເຂົ້າເຖິງຫຼັກສູດການຮຽນການສອນຕາມລະດັບຊັ້ນຮຽນຂອງເຂົາເຈົ້າ ເພື່ອໃຫ້ພວກເຂົາສາມາດປະຕິບັດໄດ້ຕາມຂໍ້ຮຽກຮອ້ງດ້ານການເລື່ອນຊັ້ນ ແລະການຈົບຊັ້ນຂອງເຂົາເຈົ້າ.
- ນັກຮຽນ ELມີສິດໃນ ໂອກາດທີ່ເທົ່າທຽມກັນໃນການເຂົ້າຮ່ວມທຸກໂປຣແກຣມ ລວມທັງການກຽມອະນຸບານ, ໂຮງຮຽນແມ່ເຫຼັກ, ໂປຣແກຣມສົ່ງເສີມເກັ່ງ ແລະມີພອນສະຫວັນ, ການສຶກສາວິຊາຊີບ ແລະເຕັກນິກ, ສິລະປະແລະການກິລາ; ການບັນຈຸເຂົ້າຮຽນຂັ້ນສູງ (AP) ແລະ ຫຼັກສູດບັນດິດສາກົນ (IB); ສະໂມສອນແລະສະພາກຽດນິຍົມຕ່າງໆ.

## *ຫຼີກລຽງການກະທຳທີ່ແບ່ງແຍກນັກຮຽນ EL ໂດຍບໍ່ຈຳເປັນ*

- ໂດຍທົ່ວໄປແລ້ວ ເຂດການສຶກສາບໍ່ສາມາດແບ່ງແຍກນັກຮຽນຕ່າງໆໂດຍອີງໃສ່ຊາດກຳເນີດຫຼືສະຖານະຂອງ EL ໄດ້. ເຖິງແມ້ວ່າບາງໂປຣແກຣມ EL ສະເພາະອາດຈະຖືກອອກແບບມາເພື່ອກຳນົດໃຫ້ນັກຮຽນ EL ໄດ້ຮັບການສິດສອນແຍກຕ່າງຫາກສຳລັບສ່ວນເວລາທີ່ຈຳກັດ

ຂອງມື້ ຫຼືໄລຍະເວລາໃດໜຶ່ງກໍ່ຕາມ, ເຂດການສຶກສາ ແລະລັດໄດ້ຖືກຄາດຫວັງໃຫ້ດຳເນີນໂປຣແກຣມທີ່ເລືອກຂອງເຂົາເຈົ້າໃນລັກສະນະທີ່ມີການແບ່ງແຍກໜ້ອຍທີ່ສຸດໂດຍສອດຄ່ອງກັບການໄດ້ບັນລຸເປົ້າໝາຍດ້ານການສຶກສາທີ່ກຳນົດໄວ້ຂອງໂປຣແກຣມນັ້ນ.

## *ການປະເມີນນັກຮຽນ EL ສຳລັບການສຶກສາພິເສດ ແລະການສະໜອງການບໍລິການຄວບຄູ່*

- ນັກຮຽນ EL ທີ່ພິການ ຕອ້ງຖືກສະໜອງ *ທັງ* ການຊ່ວຍເຫຼືອດ້ານພາສາ ແລະການບໍລິການທີ່ກ່ຽວຂ້ອງກັບຄວາມພິການທີ່ພວກເຂົາມີສິດໄດ້ຮັບພາຍໃຕ້ກົດໝາຍຂອງລັດຖະບານກາງ.
- ນັກຮຽນ EL ຜູ້ທີ່ອາດຈະມີຄວາມພິການ, ເຊັ່ນດຽວກັບທຸກໆນັກຮຽນຄົນອື່ນຜູ້ທີ່ອາດຈະມີຄວາມພິການ ແລະອາດຈະຮຽກຮອ້ງການບໍລິການພາຍໃຕ້ກົດໝາຍວ່າດ້ວຍການສຶກສາຂອງບຸກຄົນທີ່ມີຄວາມພິການ (Individuals with Disabilities Education Act,IDEA) ຫຼືຂໍ້ທີ 504 ຂອງກົດໝາຍວ່າດ້ວຍການຟື້ນຟູ (Rehabilitation Act) ປີ 1973, ຄົນພິການເຫລົ່ານັ້ນຕ້ອງໄດ້ຮັບການກຳນົດທີ່ຕັ້ງ, ຕອ້ງຖືກລະບຸຕົວແລະປະເມີນຜົນສຳລັບການສຶກສາສະເພາະ ແລະການບໍລິການທີ່ກ່ຽວຂ້ອງກັບຄວາມພິການຕ່າງໆໃນແບບທີ່ທ່ວງທັນເວລາ.
- ເພື່ອຫຼີກລ້ຽງການລະບຸຕົວນັກຮຽນ EL ຢ່າງບໍ່ເໝາະສົມຄືລະບຸວ່າເປັນນັກຮຽນພິການເນື່ອງຈາກຄວາມສາມາດດ້ານພາສາອັງກິດທີ່ຈຳກັດຂອງເຂົາເຈົ້າ,  ນັກຮຽນELຕ້ອງໄດ້ຮັບການປະເມີນ ໃນພາສາທີ່ເໝາະສົມສຳລັບພວກເຂົາ ອີງຕາມຄວາມຕອ້ງການ ແລະທັກສະດ້ານພາສາຂອງເຂົາເຈົ້າ.

- ເພື່ອຮັບປະກັນວ່າແຜນການສະເພາະບຸກຄົນເພື່ອສະໜອງການສຶກສາພິເສດ ຫຼືການບໍລິການທີ່ກ່ຽວຂ້ອງກັບຄວາມພິການ ໄດ້ແກ້ໄຂຄວາມຕ້ອງການທີ່ກ່ຽວຂ້ອງກັບພາສາຂອງນັກຮຽນ EL ທີ່ມີຄວາມພິການ, ມັນໄດ້ມີຄວາມສຳຄັນຢູ່ບອ່ນວ່າທີມງານທີ່ອອກແບບແຜນການນັ້ນລວມທັງຜູ້ເຂົ້າຮ່ວມທີ່ມີຄວາມຮູ້ກ່ຽວກັບຄວາມຕ້ອງການດ້ານພາສາຂອງນັກຮຽນນັ້ນ.

## *ການຕອບສະໜອງຄວາມຕ້ອງການຂອງນັກຮຽນຜູ້ທີ່ເລືອກອອກຈາກໂປຣແກຣມ EL ຫຼືການບໍລິການສະເພາະ*

- ນັກຮຽນ EL ທຸກຄົນມີສິດໃນການຮັບການບໍລິການຕ່າງໆ, ແນວໃດກໍ່ຕາມ, ພໍ່ແມ່ອາດຈະເລືອກໃຫ້ລູກຂອງຕົນອອກຈາກໂປຣແກຣມ EL ຂອງເຂດການສຶກສາ ຫຼືອອກຈາກການບໍລິການ EL ສະເພາະ ພາຍໃນໂປຣແກຣມ EL ໃດໜຶ່ງກໍ່ໄດ້.

- ເຂດການສຶກສາບໍ່ສາມາດແນະນຳໃຫ້ພໍ່ແມ່ເລືອກອອກໄປເນື່ອງຈາກເຫດຜົນໃດໆກໍ່ຕາມ. ພໍ່ແມ່ນັກຮຽນມີສິດໃນການຮັບຄຳແນະນຳ ທີ່ເປັນພາສາທີ່ພວກເຂົາສາມາດເຂົ້າໃຈກ່ຽວກັບສິດທິຂອງລູກຂອງເຂົາເຈົ້າ, ຂອບເຂດຂອງການບໍລິການ EL ທີ່ລູກຂອງເຂົາເຈົ້າສາມາດໄດ້ຮັບ ແລະຜົນປະໂຫຍດຂອງການບໍລິການດັ່ງກ່າວ. ເຂດການສຶກສາຄວນບັນທຶກເປັນເອກະສານໄວ້ຢ່າງເໝາະສົມວ່າພໍ່ແມ່ໄດ້ດຳເນີນການຕັດສິນໃຈໂດຍສະໝັກໃຈ ແລະຢ່າງມີຂໍ້ມູນຄົບຖ້ວນກ່ອນທີ່ເລືອກໃຫ້ລູກຂອງເຂົາເຈົ້າອອກ.
- ເຂດການສຶກສາຍັງຈະຕ້ອງດຳເນີນບາດກ້າວຕ່າງໆເພື່ອສະໜອງການເຂົ້າເຖິງບັນດາໂປຣແກຣມການສຶກສາຂອງຕົນໃຫ້ແກ່ນັກຮຽນ EL ທີ່ເລືອກອອກ, ສະໜອງການຕິດຕາມຄວາມກ້າວໜ້າຂອງເຂົາເຈົ້າແລະສະໜອງການບໍລິການ ELອີກຄັ້ງ ຖ້ານັກຮຽນປະສົບກັບຄວາມລຳບາກ.

## *ການຕິດຕາມ ແລະການໃຫ້ນັກຮຽນ EL ອອກຈາກໂປຣແກຣມ ແລະການບໍລິການ EL*

- ເຂດການສຶກສາຕ້ອງຕິດຕາມຄວາມກ້າວໜ້າຂອງນັກຮຽນ EL ທຸກຄົນ ເພື່ອຮັບປະກັນວ່າພວກເຂົາບັນລຸໄດ້ຄວາມຄ່ອງແຄ້ວດ້ານພາສາອັງກິດ ແລະໄດ້ຮັບເນື້ອໃນຂອງຄວາມຮູ້ທີ່ຮຽນພາຍໃນໄລຍະເວລາທີ່ເໝາະສົມ. ທຸກໆປີ,ເຂດການສຶກສາຕ້ອງດຳເນີນການປະເມີນຄວາມຄ່ອງແຄ້ວດ້ານສາພາອັງກິດ (ELP) ທີ່ໃຊ້ໄດ້ ແລະເຊື່ອຖືໄດ້ ໃນດ້ານການອ່ານ, ການຂຽນ, ການຟັງ ແລະການເວົ້າ ທີ່ສອດຄ່ອງກັບມາດຕະຖານ ELP ຂອງລັດ.
- ນັກຮຽນ EL ຕອ້ງບໍ່ອອກຈາກໂປຣ ແກຣມ EL, ການບໍລິການ ຫຼື ສະຖານະ EL ຈົນກວ່າວ່ານັກຮຽນນັ້ນສະແດງຄວາມຄ່ອງແຄ້ວດ້ານພາສາອັງກິດຕາມການປະເມີນຜົນ ELP ໃນດ້ານການເວົ້າ, ການຟັງ,ການຂຽນ ແລະການອ່ານ..
- ເຂດການສຶກສາຕ້ອງຕິດຕາມຄວາມກ້າວໜ້າດ້ານການຮຽນຂອງອະດີດນັກຮຽນ EL ເປັນເວລາຢ່າງໜ້ອຍສອງປີເພື່ອຮັບປະກັນວ່າ ນັກຮຽນນັ້ນບໍ່ໄດ້ອອກຈາກໂປຣແກຣມໄວກ່ອນກຳນົດ; ຄວາມບົກຜ່ອງດ້ານການຮຽນທີ່ພວກເຂົາກໍ່ໃຫ້ເກີດຂຶ້ນເນື່ອງຈາກໂປຣແກຣມ EL ໄດ້ຖືກແກ້ໄຂແລ້ວແລະພວກເຂົາກຳລັງເຂົ້າຮ່ວມຢ່າງມີຄວາມໝາຍໃນບັນດາໂປຣແກຣມການສຶກສາຂອງເຂດການສຶກສາໂດຍສາມາດທຽບກັບໝູ່ເພື່ອນໄວດຽວກັນຂອງເຂົາເຈົ້າຜູ້ທີ່ບໍ່ເຄີຍເປັນນັກຮຽນ EL ມາກ່ອນ (ເພື່ອນທີ່ບໍ່ເຄີຍເປັນ EL).

## *ການປະເມີນປະສິດທິຜົນຂອງໂປຣແກຣມ EL ໃນເຂດການສຶກສາ*

- ບັນດາໂປຣແກຣມ EL ຕ້ອງຖືກຄຳນວນຢ່າງມີເຫດຜົນເພື່ອເຮັດໃຫ້ນັກຮຽນ EL ມີຄວາມຄ່ອງແຄ້ວດ້ານພາສາອັງກິດ ແລະການເຂົ້າຮ່ວມຢ່າງມີຄວາມໝາຍໃນໂປຣແກຣມການ

ສຶກສາມາດຕະຖານໂດຍທຽບກັບໝູ່ເພື່ອນໄວດຽວກັນຂອງເຂົາເຈົ້າທີ່ບໍ່ເຄີຍເປັນ EL ມາກ່ອນ.

- ເຂດການສຶກສາຕ້ອງຕິດຕາມ ແລະສົມທຽບ, ເປັນຊ່ວງເວລາ, ຜົນການຮຽນຂອງ ບັນດານັກຮຽນ EL ໃນໂປຣແກຣມນັ້ນ ແລະຜູ້ທີ່ໄດ້ອອກຈາກໂປຣແກຣມແລ້ວ, ໂດຍທຽບ ກັບຜົນການຮຽນຂອງໝູ່ເພື່ອນໄວດຽວກັນຂອງພວກເຂົາທີ່ບໍ່ເຄີຍເປັນ EL .
- ເຂດການສຶກສາຕ້ອງປະເມີນບັນດາໂປຣແກຣມ EL ຕາມຊ່ວງເວລາ ໂດຍນຳໃຊ້ຂໍ້ມູນທີ່ ຖືກຕ້ອງເພື່ອປະເມີນເບິ່ງຜົນການຮຽນຂອງນັກຮຽນ EL ປະຈຸບັນ ແລະອະດີດ ໃນແບບທີ່ ຄົບຖ້ວນຮອບດ້ານ ແລະເຊື່ອຖືໄດ້ແລະຈຳຕ້ອງດັດແກ້ໂປຣແກຣມຂອງເຂົາເຈົ້າຢ່າງ ທ່ວງທັນໃນເວລາເມື່ອຕອ້ງການ.

## *ຮັບປະກັນການສື່ສານຢ່າງມີຄວາມໝາຍກັບບັນດາພໍ່ແມ່ທີ່ມີຄວາມຄ່ອງແຄ້ວດ້ານພາສາ ອັງກິດທີ່ຈຳກັດ*

- ບັນດາພໍ່ແມ່ LEP ມີສິດໄດ້ຮັບການສື່ສານທີ່ມີຄວາມໝາຍໃນພາສາທີ່ພວກເຂົາສາມາດເຂົ້າ ໃຈໄດ້ເຊັ່ນ: ເອກະສານທີ່ໄດ້ແປແລ້ວ ຫຼືລ່າມແປພາສາແລະແຈ້ງບອກຂໍ້ມູນແກ່ບັນດາພໍ່ແມ່ LEP ຢ່າງທົ່ວເຖິງກ່ຽວກັບທຸກໆໂປຣແກຣມ, ການບໍລິການ ຫຼືການເຄື່ອນໄຫວກິດຈະກຳຕ່າງ ໆເຊິ່ງນັ້ນໄດ້ເປັນສິ່ງທີ່ກັງວົນແລະສົນໃຈຂອງພໍ່ແມ່ທີ່ບໍ່ແມ່ນ LEP .
- ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິພົນລະເມືອງຂອງພໍ່ແມ່ ແລະຜູ້ປົກຄອງ LEP ແລະ ພັນທະໜ້າທີ່ສະເພາະຂອງເຂດການສຶກສາຕໍ່ກັບບັນດາພໍ່ແມ່ຂອງນັກຮຽນ LE, ກາລຸນາເຂົ້າ ເບິ່ງ

http://www2.ed.gov/about/offices/list/ocr/docs/dcl-factsheet-lep-parents-201501-laotian.pdf.

* * * * *

## ຖ້າທ່ານມີຄຳຖາມ, ຕ້ອງການຂໍ້ມູນເພີ່ມເຕີມ, ຫຼືເຊື່ອວ່າໂຮງຮຽນໃດໜຶ່ງກຳລັງລະເມີດ ກົດໝາຍລັດຖະບານກາງ:

- ທ່ານອາດຈະເຂົ້າເວັບໄຊທ໌ຂອງຫ້ອງການສິດທິພົນລະເມືອງ (OCR) ຂອງກະຊວງ ED ໄດ້ທີ່ www.ed.gov/ocr ຫຼືຕິດຕໍ່ຫາຫ້ອງການ OCR ໄດ້ທີ່ (800) 421-3481 (TDD: ໝາຍເລກໂທລະສັບ 800-877-8339) ຫຼືທີ່ອີເມວ ocr@ed.gov. ສຳລັບຂໍ້ມູນເພີ່ມເຕີມກ່ຽວ ກັບການຍື່ນການຮ້ອງຮຽນ, ເຂົ້າເບິ່ງໄດ້ທີ່ http://www2.ed.gov/about/offices/list/ocr/docs/howto-laotian.pdf.

- ທ່ານອາດຈະເຂົ້າໄປທີ່ກົມສິດທິພົນລະເມືອງຂອງກະຊວງ DOJ, ພະແນກໂອກາດດ້ານການສຶກສາ, ເວັບໄຊທ໌ທີ່ www.justice.gov/crt/about/edu/ ຫຼືຕິດຕໍ່ກະຊວງ DOJ (877) 292-3804 ຫຼື education@usdoj.gov.  ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຍື່ນການຮ້ອງຮຽນ, ເຂົ້າເບິ່ງທີ່ www.justice.gov/crt/complaint/#three.
- ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບພັນທະໜ້າທີ່ຂອງເຂດການສຶກສາຕໍ່ກັບນັກຮຽນຜູ້ຮຽນພາສາອັງກິດ ແລະພໍ່ແມ່ທີ່ມີຄວາມຄ່ອງແຄ້ວດ້ານພາສາອັງກິດຈຳກັດ, ຂໍ້ແນະນຳເພີ່ມເຕີມຂອງ OCR ແມ່ນມີໃຫ້ທີ່ http://www2.ed.gov/about/offices/list/ocr/ellresources.html.